ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0285/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 04 FEB 2021

**ໜັງສືແຈ້ງເຊີນປະມູນ**

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ມີຄວາມຕ້ອງການ ການບໍລິການ ໂຄງການ ສ້ອມແປງປ່ຽນຖ່າຍກັງຫັນນ້ຳ (Turbine runner) ສຳລັບເຄື່ອງຈັກ Unit 1, ເຂື່ອນໄຟຟ້ານ້ຳງື່ມ 2 ດ້ວຍການດຳເນີນການປະມູນເປີດກວ້າງພາຍໃນ.
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງຂອງ ຜ-ຟຟລ ພາຍໃຕ້ລະບຽບຈັດຊື້-ຈັດຈ້າງ ຜ-ຟຟລ, ສະບັບລົງວັນທີ 19/02/2018.
3. ຜ-ຟຟລ ຂໍເຊີນບັນດາບໍລິສັດທີ່ມີເງື່ອນໄຂເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ແລະ ພົວພັນກັບການບໍລິການດັ່ງກ່າວເຂົ້າຮ່ວມ.
4. ບໍລິສັດທີ່ມີເງື່ອນໄຂເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສຳນັກງານໃຫຍ່ ຜ-ຟຟລ, ຝ່າຍແຜນການ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ 08-19/02/2021 ຄື: ຕອນເຊົ້າເວລາ 08:30- 12:00 ໂມງ ແລະ ຕອນບ່າຍ ເວລາ 13:00-17:00 ໂມງ, ສຳນັກງານຕັ້ງຢູ່:ຖະໜົນມິດຕະພາບລາວ - ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງ ວຽງຈັນ, ສປປ.ລາວ, ຕູ້ ປ.ນ 2392, ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141.
5. ບໍລິສັດທີ່ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນເຖິງ ຜ-ຟຟລ ຕາມທີ່ຢູ່ທີ່ລະບຸໃນຂໍ້ 4, ຖ້າບໍ່ມີໜັງສືສະເໜີຂໍຊື້ຊອງປະມູນ, ຜ-ຟຟລ ຈະບໍ່ສາມາດຂາຍຊອງປະມູນໃຫ້ທ່ານໄດ້, ການຂາຍຊອງປະມູນຈະໄດ້ເລີ່ມຂາຍແຕ່ວັນທີ 08-19/02/2021, ໃນວັນ ແລະ ເວລາທີ່ລະບຸໃນຂໍ້ 4, ໃນລາຄາ 250.000 ກີບ (ສອງແສນຫ້າສິບພັນ) ກີບ/ຊຸດ, ວິທີການຊຳລະຕ້ອງຊຳລະເປັນເງິນສົດ, ໂດຍຈຳນວນເງິນດັ່ງກ່າວນີ້ ຜ-ຟຟລ ຈະບໍ່ມີການສົ່ງຄືນ.
6. ການລົງເບິ່ງສະຖານທີ່, ເກັບຂໍ້ມູນ ແລະ ສຳຫຼວດຄວາມສ່ຽງໃນແຕ່ລະເຂື່ອນ ບໍ່ຖືເປັນພາກບັງຄັບ. ການລົງເບິ່ງສະຖານທີຈະດຳເນີນໃນວັນທີວັນທີ 25/02/2021, ເວລາ 11:00 ໂມງ ເປັນຕົ້ນໄປ, ລາຍລະອຽດການເດີນທາງ ຄັດຕິດໃນເອກະສານປະມູນ. ໂດຍຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນ ແລະ ການເດີນທາງທັງໝົດແມ່ນຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມປະມູນ.
7. ຊອງປະມູນຕ້ອງສົ່ງໃຫ້ຕາມທີ່ຢູ່ ທີ່ລະບຸໃນຂໍ້ 4, ກ່ອນເວລາ 14:00 ໂມງ ຂອງວັນທີ 05/03/2021. ກໍລະນີທີ່ທ່ານຫາກສົ່ງຊ້າກວ່າເວລາທີ່ກຳນົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ສຳລັບເວລາເປີດຊອງປະມູນຈະໄດ້ເລີ່ມເປີດໃນເວລາ 14:00 ໂມງ ເປັນຕົ້ນໄປຂອງວັນດຽວກັນ. ໂດຍເປີດຊ້ອງໜ້າຄະນະການຈັດຊື້ ຜ-ຟຟລ ແລະ ຕົວແທນຂອງຜູ້ເຂົ້າຮ່ວມປະມູນທີ່ສົນໃຈເຂົ້າຮ່ວມ.

**ຜູ້ອຳນວຍການໃຫຍ່**

ກະຊວງ ພະລັງງານ ແລະ ບໍ່ແຮ່
ບໍລິສັດ
ຜະລິດ-ໄຟຟ້າລາວ
ມະຫາຊົນ
EDL-Generation Public Company
ນະຄອນຫຼວງ ວຽງຈັນ

ດວງສີ ພາຣາຍົກ